ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ
ຄະນະປະຈຳ

ເລກທີ 264 /ຄປຈ
ນະຄອນຫຼວງວຽງຈັນ, ວັນທີ 03/ 11 / 22

# ມະຕິ
# ວ່າດ້ວຍການແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX

- ອີງຕາມ ລັດຖະທຳມະນູນແຫ່ງ ສປປ ລາວ ສະບັບເລກທີ 63/ສພຊ, ລົງວັນທີ 08 ທັນວາ 2015;
- ອີງຕາມ ມະຕິ ຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 163/ຄປຈ, ລົງວັນທີ 05 ກໍລະກົດ 2021;
- ອີງຕາມ ໜັງສືສະເໜີ ຂອງກຳມາທິການ ວັດທະນະທຳ-ສັງຄົມ ສະພາແຫ່ງຊາດ ສະບັບເລກທີ 133/ກວທສ, ລົງວັນທີ 21 ຕຸລາ 2022;
- ອີງຕາມ ການເຫັນດີ ຂອງຄະນະປະຈຳສະພາແຫ່ງຊາດ ຄັ້ງວັນທີ 24 ຕຸລາ 2022.

## ຄະນະປະຈຳສະພາແຫ່ງຊາດ ຕົກລົງ:

**ມາດຕາ 1** ເຫັນດີແຕ່ງຕັ້ງຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX ປະກອບດ້ວຍບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເປັນເພດຍິງທັງໝົດ.

ປະທານກຳມາທິການວັດທະນະທຳ-ສັງຄົມ ແລະ ຄະນະປະທານຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ເປັນຜູ້ນຳພາການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ, ມີຄວາມຮັບຜິດຊອບຕໍ່ຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX.

**ມາດຕາ 2** ຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຊຸດທີ IX ປະກອບດ້ວຍປະທານ, ຮອງປະທານ ແລະ ກຳມະການ ດັ່ງນີ້:

**1. ປະທານ:**

1) ທ່ານ ນາງ ທຸມມາລີ ວົງພະຈັນ — ກຳມະການຄະນະປະຈຳ, ປະທານກຳມາທິການວັດທະນະທຳ-ສັງຄົມ.

**2. ບັນດາຮອງປະທານ:**

1) ທ່ານ ນາງ ວັນດີ ບຸດທະສະວົງ — ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ;

2) ທ່ານ ນາງ ຈັນໂສດາ ພອນທິບ — ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ;

3) ທ່ານ ນາງ ພອນເພັດ ອຸ່ນແກ້ວ — ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ;

4) ທ່ານ ນາງ ວິໄຊ ສຣິດທິຣາດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ.

3. **ບັນດາກຳມະການ:**

1) ທ່ານ ປອ.ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານຄະນະປະຈຳສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ;

2) ທ່ານ ນາງ ປິ່ງຄຳ ລາຊະສິມມາ ກຳມະການສູນກາງພັກ, ເລຂາທິການ ສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ;

3) ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ;

4) ທ່ານ ນາງ ມີນາພອນ ໄຊສົມພູ ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ປະທານສະພາປະຊາຊົນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື;

5) ທ່ານ ນາງ ເກດມະນີ ບັນດາສັກ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ;

6) ທ່ານ ນາງ ສົມພຽນ ວົງໄຊ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ;

7) ທ່ານ ນາງ ສົມປະເສີດ ສີຫາລາດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ;

8) ທ່ານ ປອ.ນາງ ວາລີ ເວດສະພົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ;

9) ທ່ານ ນາງ ຈັນມະນີ ດວງພາສຸກ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 2 ແຂວງຜົ້ງສາລີ;

10) ທ່ານ ນາງ ເກສອນ ແສງຍະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 3 ແຂວງຫຼວງນ້ຳທາ;

11) ທ່ານ ນາງ ຄຳພອນ ພົມມະຈັນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 4 ແຂວງອຸດົມໄຊ;

12) ທ່ານ ນາງ ບົວຄົມ ຂານສຸວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 5 ແຂວງບໍ່ແກ້ວ;

13) ທ່ານ ນາງ ມະນີວັນ ເຍຍປາວເຮີ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງ ຫຼວງພະບາງ;

14) ທ່ານ ນາງ ວຽນວິໄລ ດີລະພັນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 6 ແຂວງຫຼວງພະບາງ;

15) ທ່ານ ນາງ ວັນນາ ພົມວິສອນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ;

16) ທ່ານ ນາງ ສອຍເພັດ ທອງສົມບັດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ;

17) ທ່ານ ນາງ ສິດທິດາ ທິບມູນຕາລີ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 9 ແຂວງຊຽງຂວາງ;

18) ທ່ານ ນາງ ມະໄລສີ ທຳມະໂຄດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ;

19) ທ່ານ ນາງ ຂັນທອງ ພັນທະຈັກ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ;

20) ທ່ານ ນາງ ບົງອອນ ໄຊຍະສິດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ;

21) ທ່ານ ນາງ ອາລີ ບົວຈູມ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 12 ແຂວງຄຳມ່ວນ;

22) ທ່ານ ປອ.ນາງ ບົວໄຂ ເພັງພະຈັນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ;

23) ທ່ານ ນາງ ທົງຄຳ ໄຊຍະຄົມ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ;

24) ທ່ານ ນາງ ທອງໃບ ໄຊຍະສານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ;

25) ທ່ານ ນາງ ໄຊຊົມຊື່ນ ໂພທິສານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 13 ແຂວງສະຫວັນນະເຂດ;

26) ທ່ານ ນາງ ບຸນມີ ຈຸນລະຈັກ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ແຂວງສາລະວັນ;

27) ທ່ານ ນາງ ບຸນສຸວັນ ໂພໄຊຊະນະສັກ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ;

28) ທ່ານ ນາງ ທັດສະດາພອນ ຈັນທະມາດ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ;

29) ທ່ານ ນາງ ໄຮມະນີ ວົງໝໍ່ແກ້ວ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ;

30) ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື;

31) ທ່ານ ນາງ ຂັນກາບ ໄຊຍະກຸມມານ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 18 ແຂວງໄຊສົມບູນ.

**ມາດຕາ 3 ກົງຈັກຊ່ວຍວຽກ**

ຄະນະສະມາຊິກສະພາແຫ່ງຊາດເພດຍິງ ມີກົງຈັກຊ່ວຍວຽກ ຊຶ່ງແມ່ນພະແນກປະຊາກອນ ແລະ ຄວາມສະເໝີພາບຍິງ-ຊາຍ, ກົມວັດທະນະທຳ ກຳມາທິການວັດທະນະທຳ-ສັງຄົມ ເປັນກອງເລຂາຊ່ວຍວຽກ.

**ມາດຕາ 4 ງົບປະມານ ແລະ ຕາປະທັບ**

ງົບປະມານໃນການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ແມ່ນໄດ້ມາຈາກງົບປະມານຂອງລັດ ຊຶ່ງຄະນະປະຈຳສະພາແຫ່ງຊາດຈັດສັນໃຫ້ແຕ່ລະປີ ແລະ ຈາກການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ.

ຄະນະສະມາຊິກສະພາແຫ່ງຊາດເພດຍິງ ນຳໃຊ້ຕາປະທັບຂອງກຳມາທິການວັດທະນະທຳ-ສັງ ຄົມ.

**ມາດຕາ 5** ຄະນະປະທານ, ກຳມະການຄະນະສະມາຊິກສະພາແຫ່ງຊາດ ເພດຍິງ, ຄະນະປະທານກຳມາທິການວັດທະນະທຳ-ສັງຄົມ, ປະທານກຳມາທິການການຕ່າງປະເທດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ເລຂາທິການສະພາແຫ່ງຊາດ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິສະບັບນີ້ ເປັນຢ່າງດີ.

ມອບໃຫ້ຄະນະສະມາຊິກສະພາແຫ່ງຊາດ ເພດຍິງ ຄົ້ນຄວ້າ ແລະ ອອກລະບຽບການ ວ່າດ້ວຍການເຄື່ອນໄຫວວຽກງານຂອງຄະນະສະມາຊິກສະພາແຫ່ງຊາດເພດຍິງ ເປັນອັນສະເພາະ.

**ມາດຕາ 5** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

ປອ ໄຊສົມພອນ ພົມວິຫານ

<u>ບ່ອນສົ່ງ:</u>

| | |
|---|---|
| – ຄະນະປະທານ | 01 ສະບັບ; |
| – ກຳມະການຄະນະສະມາຊິກສະພາແຫ່ງຊາດ ເພດຍິງ | 01 ສະບັບ; |
| – ປະທານກຳມາທິການການຕ່າງປະເທດ | 01 ສະບັບ; |
| – ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ | 01 ສະບັບ; |
| – ກຳມາທິການວັດທະນະທຳ-ສັງຄົມ | 01 ສະບັບ; |
| – ຄະນະເລຂາທິການສະພາແຫ່ງຊາດ | 01 ສະບັບ; |
| – ກົມວັດທະນະທຳ | 01 ສະບັບ; |
| – ກົມຈັດຕັ້ງ-ພະນັກງານ | 01 ສະບັບ; |
| – ກົມການເງິນ | 04 ສະບັບ |
| – ຂາເຂົ້າ-ຂາອອກ | 01 ສະບັບ. |